ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------

ລັດຖະບານ

ເລກທີ 169 /ລບ

ນະຄອນຫຼວງວຽງຈັນ, ວັນທີ 19-6-2013

# ດຳລັດ
# ວ່າດ້ວຍສັງຄົມສົງເຄາະ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມໜັງສືສະເໜີຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 2170/ຮສສ, ລົງວັນທີ 27 ພຶດສະພາ 2013.

## ລັດຖະບານ ອອກດຳລັດ :

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫລັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍສັງຄົມສົງເຄາະ ໃຫ້ແກ່ຜູ້ປະສົບໄພພິບັດ ແລະ ຜູ້ດ້ອຍໂອກາດ ເພື່ອໃຫ້ໄດ້ຮັບການຊ່ວຍເຫລືອ ແລະ ການບໍລິການຢ່າງມີປະສິດທິພາບ, ປະສິດທິຜົນ, ເປັນທຳ ແລະ ທົ່ວເຖິງ, ແນໃສ່ແກ້ໄຂຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈ, ຮັບປະກັນເງື່ອນໄຂການດຳລົງຊີວິດ ໃນຂັ້ນພື້ນຖານ ປະກອບສ່ວນເຂົ້າໃນການປະຕິບັດແຜນການລຶບລ້າງຄວາມທຸກຍາກ ທີ່ລັດຖະບານ ວາງອອກ.

### ມາດຕາ 2. ສັງຄົມສົງເຄາະ

ສັງຄົມສົງເຄາະ ແມ່ນການປະຕິບັດນະໂຍບາຍການຊ່ວຍເຫລືອ ແລະ ການບໍລິການດ້ານວັດຖຸ ແລະ ຈິດໃຈໃຫ້ແກ່ຜູ້ປະສົບໄພພິບັດ ແລະ ຜູ້ດ້ອຍໂອກາດໃນສັງຄົມ ໂດຍການປະກອບສ່ວນຂອງລັດ, ບຸກຄົນ, ນິຕິບຸກຄົນ, ຊຸມຊົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 3. ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສັງຄົມ** ຫມາຍເຖິງ ການພົວພັນລະຫວ່າງຄົນກັບຄົນ, ກຸ່ມຄົນ, ຊຸມຊົນ ຫລື ການຈັດຕັ້ງຢູ່ໃນສັງຄົມ;
2. **ສົງເຄາະ** ຫມາຍເຖິງ ການໃຫ້ການຊ່ວຍເຫລືອ ແລະ ການບໍລິການ ເພື່ອຕອບສະໜອງຄວາມຕ້ອງການດ້ານວັດຖຸ ແລະ ຈິດໃຈ;
3. **ເດັກທີ່ຕ້ອງການການປົກປ້ອງພິເສດ** ໝາຍເຖິງ ເດັກກຳພ້າ, ກຳພອຍ, ເດັກທີ່ຖືກປະຖິ້ມ, ເດັກທີ່ຖືກທຳຮ້າຍຮ່າງກາຍ, ເດັກທີ່ຖືກຂູດຮີດ ແລະ ທາລຸນທາງເພດ, ເດັກທີ່ຕົກເປັນເຫຍື່ອຂອງການຄ້າມະນຸດ, ເດັກທີ່ເຮັດວຽກຢູ່ໃນສະພາບທີ່ເປັນອັນຕະລາຍຮ້າຍແຮງຕໍ່ສຸຂະພາບ, ຊີວິດ ຫລື ຖືກຂູດຮີດແຮງງານ, ເດັກທີ່ຕິດຢາເສບຕິດ ແລະ ເດັກທີ່ບໍ່ໄດ້ຮັບຄວາມຍຸຕິທຳໃນການດຳເນີນຄະດີ;
4. **ເດັກທີ່ຕົກຢູ່ໃນຄວາມສ່ຽງ** ໝາຍເຖິງ ເດັກທີ່ດຳລົງຊີວິດຢູ່ໃນສະພາບທີ່ເຮັດໃຫ້ເດັກເສຍໂອກາດ, ມີຄວາມອັນຕະລາຍ ແຕ່ຍັງບໍ່ທັນສົ່ງຜົນກະທົບຕໍ່ການພັດທະນາຂອງເດັກ;
5. **ດ້ອຍໂອກາດ** ໝາຍເຖິງ ການຂາດເງື່ອນໄຂໃນການເຂົ້າເຖິງການບໍລິການທາງດ້ານການສຶກສາ, ວິຊາຊີບ, ການປິ່ນປົວສຸຂະພາບ, ການໃຫ້ຄຳປຶກສາທາງດ້ານຈິດໃຈ, ສະບຽງອາຫານ, ເຄື່ອງໃຊ້ສອຍ ແລະ ທີ່ຢູ່ອາໄສ;
6. **ໄພພິບັດ** ໝາຍເຖິງ ໄພອັນຕະລາຍທີ່ເກີດຂຶ້ນຈາກທຳມະຊາດ ແລະ ການກະທຳຂອງມະນຸດ ເຊັ່ນ: ອັກຄີໄພ, ອຸທົກກະໄພ, ວາຕະໄພ, ໄພແຫ້ງແລ້ງ, ສັດຕູພືດ, ພະຍາດລະບາດ, ອາກາດໜາວ, ໝາກເຫັບຕົກ, ດິນເຈື່ອນ, ແຜ່ນດິນໄຫວ, ພູເຂົາໄຟລະເບີດ ຊຶ່ງໄດ້ເກີດຂຶ້ນ ແລະ ສ້າງຄວາມເສຍຫາຍຕໍ່ຊີວິດ, ຊັບສິນ, ເສດຖະກິດ ແລະ ສິ່ງແວດລ້ອມ;
7. **ການຊ່ວຍເຫລືອສຸກເສີນ** ໝາຍເຖິງ ການກູ້ຊີວິດ, ຊັບສິນຂອງພົນລະເມືອງ ແລະ ການບັນເທົາທຸກແກ່ຜູ້ກຳລັງປະສົບໄພພິບັດ;
8. **ວັດຖຸທີ່ໃຊ້ໃນການສົງເຄາະ** ໝາຍເຖິງ ສະບຽງອາຫານ, ເຄື່ອງໃຊ້ໃນຄົວເຮືອນ, ເຄື່ອງນຸ່ງຫົ່ມ, ສິ່ງປຸກສ້າງ ແລະ ເຄື່ອງມືປະກອບອາຊີບ.

**ມາດຕາ 4. ພັນທະຂອງພົນລະເມືອງ**

ພົນລະເມືອງລາວ, ຊາວຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ດຳລົງຊີວິດຢູ່ໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ລ້ວນແຕ່ມີພັນທະໃນການປະກອບສ່ວນເຂົ້າໃນວຽກງານສັງຄົມສົງເຄາະ.

**ມາດຕາ 5. ຫລັກການພື້ນຖານຂອງວຽກງານສັງຄົມສົງເຄາະ**

ວຽກງານສັງຄົມສົງເຄາະ ໃຫ້ປະຕິບັດຕາມຫລັກການພື້ນຖານ ດັ່ງນີ້:

1. ຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງກຸ່ມເປົ້າໝາຍ ;
2. ຮັບປະກັນຄວາມສະເໝີພາບ, ໂປ່ງໃສ ແລະ ຍຸຕິທຳ.

ມາດຕາ 6. ຂອບເຂດການນຳໃຊ້ດຳລັດ

ດຳລັດສະບັບນີ້ ນຳໃຊ້ສຳລັບການຈັດຕັ້ງ, ນິຕິບຸກຄົນ, ຄອບຄົວ ແລະ ບຸກຄົນ ທີ່ກ່ຽວຂ້ອງກັບການເຄື່ອນໄຫວຂອງວຽກງານສັງຄົມສົງເຄາະ.

## ໝວດທີ 2
## ເປົ້າໝາຍ, ວິທີການ ແລະ ຮູບແບບການສົງເຄາະ

**ມາດຕາ 7. ເປົ້າໝາຍທີ່ໄດ້ຮັບການສົງເຄາະ**

ເປົ້າໝາຍທີ່ຈະໄດ້ຮັບການສົງເຄາະ ມີດັ່ງນີ້:

1. ເດັກກຳພ້າ, ກຳພອຍ ອາຍຸຕ່ຳກວ່າ 18 ປີ, ຂາດທີ່ເພິ່ງອາໄສ, ຂາດຜູ້ດູແລ ຫລື ອາໄສຢູ່ນຳຄອບຄົວທີ່ທຸກຍາກ;
2. ຜູ້ພິການທາງດ້ານຮ່າງກາຍ ຫລື ມັນສະໝອງ ບໍ່ສາມາດກຸ້ມຕົນເອງໄດ້ ທີ່ຂາດຜູ້ດູແລ ຫລື ອາໄສຢູ່ ນຳຄອບຄົວທີ່ທຸກຍາກ;
3. ຜູ້ອາຍຸສູງ ຫົກສິບ ປີຂຶ້ນໄປ ທີ່ປ່ຽວພອຍ, ທຸກຍາກ ຫລື ອາໄສ ຢູ່ນຳຄອບຄົວທີ່ທຸກຍາກ;
4. ຜູ້ທີ່ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ທຸກຍາກ ຫລື ຕິດແປດພະຍາດ ທີ່ເປັນອັນຕະລາຍຕໍ່ສຸຂະພາບ ແລະ ຊີວິດ;
5. ບຸກຄົນ ຫລື ຄອບຄົວ ທີ່ປະສົບໄພເຄາະຮ້າຍຈາກໄພພິບັດ.

**ມາດຕາ 8. ວິທີການສົງເຄາະ**

ວິທີການສົງເຄາະປະກອບມີ 2 ວິທີ ຄື: ວິທີສຸກເສີນ ແລະ ວິທີປົກກະຕິ .

1. **ວິທີສຸກເສີນ** ແມ່ນການຊ່ວຍເຫລືອໂດຍທັນທີແກ່ຜູ້ປະສົບເຄາະຮ້າຍ ຈາກໄພພິບັດທີ່ເກີດຂຶ້ນ;
2. **ວິທີປົກກະຕິ** ແມ່ນການຊ່ວຍເຫລືອໃຫ້ແກ່ຜູ້ປະສົບເຄາະຮ້າຍຈາກໄພພິບັດ ແລະ ຜູ້ດ້ອຍໂອກາດ ຫລັງໄດ້ຮັບຂໍ້ມູນຈາກພາກສ່ວນທີ່ກ່ຽວຂ້ອງ;
3. ການສືບຕໍ່ໃຫ້ການຊ່ວຍເຫລືອແຕ່ລະຄັ້ງ ຕ້ອງມີການທົບທວນຄືນກ່ຽວກັບເງື່ອນໄຂຂອງບຸກຄົນ ແລະ ຄອບຄົວ ຢ່າງເປັນລາຍລັກອັກສອນຈາກພາກສ່ວນກ່ຽວຂ້ອງ.

**ມາດຕາ 9. ຮູບແບບການສົງເຄາະ**

ຮູບແບບການສົງເຄາະປະກອບດ້ວຍ:

1. ຊ່ວຍເປັນເງິນ ຫລື ເປັນວັດຖຸ;
2. ຊ່ວຍຍົກຍ້າຍໄປຢູ່ສະຖານທີ່ປອດໄພ;
3. ຊ່ວຍເບິ່ງແຍງ, ລ້ຽງດູຊີວິດການເປັນຢູ່ ແລະ ສຸຂະພາບ;
4. ຊ່ວຍຝຶກອົບຮົມວິຊາຊີບ.

## ໝວດທີ 3
## ປະເພດການສົງເຄາະ

**ມາດຕາ 10. ປະເພດການສົງເຄາະ**

ການສົງເຄາະປະກອບດ້ວຍ 7 ປະເພດຄື:

1. ການຈັດຫາ ແລະ ການປຸກສ້າງທີ່ຢູ່ອາໄສ;
2. ການຊ່ວຍເຫລືອເຄື່ອງອຸປະໂພກ-ບໍລິໂພກ;
3. ການຊ່ວຍເຫລືອດ້ານການແພດ;
4. ການຊ່ວຍເຫລືອດ້ານກົດໝາຍ;
5. ການຊ່ວຍເຫລືອດ້ານການສຶກສາ;
6. ການຊ່ວຍເຫລືອຝຶກວິຊາຊີບ, ພັດທະນາສີມືແຮງງານ ແລະ ຈັດຫາວຽກເຮັດງານທໍາ;
7. ການຊ່ວຍເຫລືອຊາປານະກິດສົບ.

**ມາດຕາ 11. ການຈັດຫາ ແລະ ການປຸກສ້າງທີ່ພັກອາໄສ**

ການຈັດຫາ ແລະ ການປຸກສ້າງທີ່ພັກອາໄສ ປະກອບດ້ວຍ:

1. ການຈັດຫາທີ່ພັກຊົ່ວຄາວໃຫ້ຜູ້ປະສົບເຄາະຮ້າຍຈາກໄພພິບັດ;
2. ລົງທຶນປຸກສ້າງທີ່ຢູ່ອາໄສຊົ່ວຄາວ ຫລື ຖາວອນ ໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບຈາກໄພພິບັດ ຫລື ຜູ້ທຸກຍາກ;
3. ສ້າງສູນຊ່ວຍເຫລືອເດັກທີ່ຕ້ອງການປົກປ້ອງພິເສດ, ຜູ້ປະສົບເຄາະຮ້າຍຈາກການຄ້າມະນຸດ.

**ມາດຕາ 12. ການຊ່ວຍເຫລືອເຄື່ອງອຸປະໂພກ-ບໍລິໂພກ**

ການຊ່ວຍເຫລືອເຄື່ອງອຸປະໂພກ-ບໍລິໂພກ ປະກອບດ້ວຍ ການຊ່ວຍເຫລືອບັນເທົາທຸກ ແລະ ຊ່ວຍເຫລືອຟື້ນຟູຊີວິດການເປັນຢູ່.

**ມາດຕາ 13. ການຊ່ວຍເຫລືອດ້ານການແພດ**

ການຊ່ວຍເຫລືອດ້ານການແພດ ປະກອບດ້ວຍ ການໃຫ້ຄໍາປຶກສາດ້ານການແພດ, ການກັນພະຍາດ, ການກວດ, ການປິ່ນປົວ, ການຟື້ນຟູ ແລະ ສົ່ງເສີມສຸຂະພາບ.

**ມາດຕາ 14. ການຊ່ວຍເຫລືອດ້ານກົດໝາຍ**

ການຊ່ວຍເຫລືອດ້ານກົດໝາຍ ແມ່ນການໃຫ້ການຊ່ວຍເຫລືອດ້ວຍການໃຫ້ຄໍາປຶກສາກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງເປົ້າໝາຍ ແລະ ກຸ່ມເປົ້າໝາຍ ຕາມກົດໝາຍຂອງ ສປປ ລາວ, ຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 15. ການຊ່ວຍເຫລືອດ້ານການສຶກສາ**

ເດັກທີ່ຕ້ອງການໄດ້ຮັບການປົກປ້ອງພິເສດ, ເດັກດ້ອຍໂອກາດທີ່ຕົກຢູ່ໃນຄວາມສ່ຽງ ຈະໄດ້ຮັບການຊ່ວຍເຫລືອທຶນການສຶກສາຕາມກົດໝາຍວ່າດ້ວຍການສຶກສາ.

**ມາດຕາ 16. ການຊ່ວຍເຫລືອຝຶກວິຊາຊີບ, ພັດທະນາສີມືແຮງງານ ແລະ ຈັດຫາວຽກເຮັດງານທຳ**

ເດັກທີ່ຕ້ອງການໄດ້ຮັບການປົກປ້ອງພິເສດ, ເດັກດ້ອຍໂອກາດທີ່ຕົກຢູ່ໃນຄວາມສ່ຽງ, ຜູ້ດ້ອຍໂອກາດ ຈະໄດ້ຮັບການຊ່ວຍເຫລືອໃນການຝຶກວິຊາຊີບ, ພັດທະນາສີມືແຮງງານ ແລະ ຈັດຫາວຽກເຮັດງານທຳ ເພື່ອໃຫ້ມີລາຍໄດ້ສາມາດກຸ້ມຕົນເອງ.

**ມາດຕາ 17. ການຊ່ວຍເຫລືອຊາປະນາກິດສົບຜູ້ເສຍຊີວິດ**

ຜູ້ທີ່ຢູ່ໃນກຸ່ມເປົ້າໝາຍຕາມກຳນົດໄວ້ໃນ ມາດຕາ 7 ຫາກເສຍຊີວິດຈະໄດ້ຮັບການຊ່ວຍເຫລືອຊາປະນະກິດສົບ.

## ໝວດທີ 4
## ກອງທຶນສັງຄົມສົງເຄາະ

**ມາດຕາ18. ກອງທຶນສົງເຄາະ**

ກອງທຶນສົງເຄາະ ແມ່ນກອງທຶນໜຶ່ງທີ່ລັດສ້າງຕັ້ງຂຶ້ນຢູ່ສູນກາງ ແລະ ທ້ອງຖິ່ນ ເພື່ອນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດນະໂຍບາຍສັງຄົມສົງເຄາະ ໃຫ້ແກ່ເປົ້າໝາຍ ແລະ ກຸ່ມເປົ້າໝາຍ ຕາມທີ່ກຳນົດໄວ້ໃນ ມາດຕາ 7 ຂອງດຳລັດສະບັບນີ້.

ລັດຖະບານເປັນຜູ້ອອກລະບຽບການ ໃນການສ້າງຕັ້ງ, ຄຸ້ມຄອງ ແລະ ນຳໃຊ້ກອງທຶນສົງເຄາະ.

**ມາດຕາ 19. ແຫລ່ງຂອງກອງທຶນສົງເຄາະ**

ກອງທຶນສົງເຄາະ ປະກອບດ້ວຍເງິນສົດ ຫລື ວັດຖຸ ຊຶ່ງໄດ້ມາຈາກ:

1. ງົບປະມານຂອງລັດ;
2. ການບໍລິຈາກຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ;
3. ການຊ່ວຍເຫລືອລ້າຈາກອົງການຈັດຕັ້ງສາກົນ;
4. ການຈັດກິດຈະກຳຫາລາຍໄດ້ ເພື່ອການສົງເຄາະຕ່າງໆ;
5. ດອກເບ້ຍເງິນຝາກຂອງກອງທຶນ.

## ໝວດທີ 5
## ສິດ ແລະ ພັນທະຂອງຜູ້ທີ່ໄດ້ຮັບການສົງເຄາະ

**ມາດຕາ 20. ສິດຂອງຜູ້ທີ່ໄດ້ຮັບການສົງເຄາະ**

ຜູ້ທີ່ໄດ້ຮັບການສົງເຄາະມີສິດ ດັ່ງນີ້:

1. ຮັບເອົາການຊ່ວຍເຫລືອ ແລະ ນຳໃຊ້ຢ່າງຖືກຕ້ອງ;
2. ຮັບຮູ້ຂໍ້ມູນຂ່າວສານກ່ຽວກັບການສົງເຄາະ;

3. ຕຳນິ, ສິ່ງຂ່າວ, ຮ້ອງຮຽນ, ຮ້ອງທຸກ ແລະ ຮ້ອງຟ້ອງ ຕໍ່ການກະທຳທີ່ບໍ່ຖືກຕ້ອງກ່ຽວກັບການສົງເຄາະ;
4. ສິດອື່ນ ຕາມລະບຽບກົດໝາຍ.

**ມາດຕາ 21. ພັນທະຂອງຜູ້ທີ່ໄດ້ຮັບການສົງເຄາະ**

ຜູ້ທີ່ໄດ້ຮັບການສົງເຄາະມີພັນທະ ດັ່ງນີ້:

1. ສະໜອງຂໍ້ມູນສະພາບຄວາມເປັນຈິງຂອງຕົນເອງ ແລະ ຄອບຄົວ;
2. ເຂົ້າຮ່ວມເຄື່ອນໄຫວວຽກງານສັງຄົມສົງເຄາະ;
3. ພັດທະນາຕົນເອງ ແລະ ຄອບຄົວໃຫ້ມີຊີວິດການເປັນຢູ່ດີຂຶ້ນ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 22. ຂໍ້ຫ້າມສຳລັບພະນັກງານ ຫລື ເຈົ້າໜ້າທີ່ສັງຄົມສົງເຄາະ**

ຫ້າມພະນັກງານ ຫລື ເຈົ້າໜ້າທີ່ສັງຄົມສົງເຄາະ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ອຳນາດ, ຕຳແໜ່ງ, ໜ້າທີ່ ເພື່ອຍັກຍອກ, ຫາຜົນປະໂຫຍດສ່ວນຕົວ ຫລື ສ້າງຄວາມເສຍຫາຍແກ່ຜູ້ອື່ນ;
2. ໃຊ້ຄວາມຮຸນແຮງ, ອາວຸດ, ທໍລະມານ, ການກະທຳ ແລະ ວາຈາທີ່ບໍ່ເໝາະສົມ;
3. ປະລະໜ້າທີ່ ແລະ ຫລົບຫລີກການເຄື່ອນໄຫວວຽກງານ;
4. ເມີນເສີຍ, ປະໝາດ, ຂາດຄວາມຮັບຜິດຊອບ, ບິດເບືອນຄວາມຈິງ;
5. ຕົວະຍົວະ, ຫລອກລວງ, ທວງເອົາ, ຂໍເອົາ, ຮັບເອົາ ຫລື ໃຫ້ສິນບົນ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດດຳລັດສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 23. ຂໍ້ຫ້າມສຳລັບຜູ້ທີ່ໄດ້ຮັບການສົງເຄາະ**

ຫ້າມຜູ້ທີ່ໄດ້ຮັບການສົງເຄາະ ມີພຶດຕິກຳ ດັ່ງນີ້:

1. ໃຫ້ຂໍ້ມູນເທັດ ແລະ ປອມແປງເອກະສານ;
2. ສົມຮູ້ຮ່ວມຄິດແກ່ພະນັກງານ ຫລື ເຈົ້າໜ້າທີ່;
3. ບິດເບືອນ, ກ່າວຫາພະນັກງານ, ເຈົ້າໜ້າທີ່ ຫລື ການຈັດຕັ້ງໂດຍບໍ່ມີມູນຄວາມຈິງ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດຕໍ່ດຳລັດສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 24. ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ**

ຫ້າມບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ທີ່ມີພຶດຕິກຳ ດັ່ງນີ້:

1. ສວຍໂອກາດສໍ້ລາດບັງຫລວງ;
2. ສົມຮູ້ຮ່ວມຄິດກັບເປົ້າໝາຍເພື່ອສໍ້ໂກງ;
3. ການບໍລິຈາກວັດຖຸ, ສິ່ງຂອງ ທີ່ໝົດອາຍຸນຳໃຊ້ ຫລື ບໍ່ມີຄຸນນະພາບ.

## ໝວດທີ 7
## ການແກ້ໄຂຂໍ້ຂັດແຍ່ງ

### ມາດຕາ 25. ອົງການແກ້ໄຂຂໍ້ຂັດແຍ່ງ

ອົງການແກ້ໄຂຂໍ້ຂັດແຍ່ງປະກອບດ້ວຍ:

1. ອົງການປົກຄອງທ້ອງຖິ່ນ;
2. ຂະແໜງການທີ່ກ່ຽວຂ້ອງ;
3. ຂະແໜງແຮງງານ ແລະ ສະຫວັດດີການສັງຄົມ;
4. ສານປະຊາຊົນ.

### ມາດຕາ 26. ປະເພດຂໍ້ຂັດແຍ່ງ

ຂໍ້ຂັດແຍ່ງປະກອບດ້ວຍ 2 ປະເພດຄື:

1. ຜົນປະໂຫຍດກ່ຽວກັບການປະຕິບັດນະໂຍບາຍສົງເຄາະ ດ້ານປະລິມານ, ຄຸນນະພາບ ແລະ ກຳນົດເວລາ;
2. ການບໍ່ປະຕິບັດສິດ ແລະ ພັນທະຕາມທີ່ໄດ້ກຳນົດໃນດຳລັດສະບັບນີ້.

### ມາດຕາ 27. ຮູບການແກ້ໄຂຂໍ້ຂັດແຍ່ງ

ຮູບການແກ້ໄຂຂໍ້ຂັດແຍ່ງ ປະກອບດ້ວຍ: ການແກ້ໄຂທາງບໍລິຫານ ແລະ ການແກ້ໄຂຕາມຂະບວນການຍຸຕິທຳ.

### ມາດຕາ 28. ຂັ້ນຕອນການແກ້ໄຂຂໍ້ຂັດແຍ່ງ

ຂໍ້ຂັດແຍ່ງເກີດຂຶ້ນຢູ່ຂັ້ນໃດ ຕ້ອງແມ່ນຂັ້ນນັ້ນເປັນຜູ້ແກ້ໄຂ, ຖ້າບໍ່ສາມາດຕົກລົງກັນໄດ້ ຈຶ່ງສະເໜີຕໍ່ຂັ້ນເທິງຖັດໄປ, ຖ້າຫາກຍັງແກ້ໄຂບໍ່ໄດ້ແມ່ນໃຫ້ຮ້ອງຟ້ອງຕໍ່ສານປະຊາຊົນ ຕາມຂະບວນການຍຸຕິທຳ.

## ໝວດທີ 8
## ການຄຸ້ມຄອງ ແລະ ການກວດກາວຽກງານສັງຄົມສົງເຄາະ

### ມາດຕາ 29. ອົງການຄຸ້ມຄອງ ແລະ ກວດກາວຽກງານສັງຄົມສົງເຄາະ

ອົງການຄຸ້ມຄອງ ແລະ ກວດກາວຽກງານສັງຄົມສົງເຄາະ ປະກອບດ້ວຍ:

1. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
2. ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນ;
3. ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ, ເທດສະບານ.

**ມາດຕາ 30. ສິດ ແລະ ໜ້າທີ່ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ**

ໃນການຄຸ້ມຄອງວຽກງານສັງຄົມສົງເຄາະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າແຜນນະໂຍບາຍ, ແຜນຍຸດທະສາດ, ລະບຽບການ, ກົນໄກ ແລະ ແຜນງົບປະມານຮັບໃຊ້ວຽກງານສັງຄົມສົງເຄາະ ສະເໜີລັດຖະບານພິຈາລະນາ;
2. ອອກລະບຽບການ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການກ່ຽວກັບວຽກງານສັງຄົມສົງເຄາະ;
3. ໂຄສະນາ, ເຜີຍແຜ່ແນວທາງນະໂຍບາຍ, ລະບຽບກົດໝາຍ, ບັນດານິຕິກຳຕ່າງໆ ກ່ຽວກັບວຽກງານສັງຄົມສົງເຄາະ;
4. ກໍ່ສ້າງ, ບຳລຸງພະນັກງານວິຊາການວຽກງານກ່ຽວກັບສັງຄົມສົງເຄາະ;
5. ຊີ້ນຳ, ຕິດຕາມ, ກວດກາການຈັດຕັ້ງປະຕິບັດວຽກງານກ່ຽວກັບສັງຄົມສົງເຄາະ;
6. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ຊຸກຍູ້ມູນນິທິ, ສະມາຄົມ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວວຽກງານສັງຄົມສົງເຄາະ ຕາມພາລະບົດບາດຂອງຕົນ;
7. ປະສານສົມທົບກັບຂະແໜງການ ແລະ ການຈັດຕັ້ງຕ່າງໆ ທີ່ກ່ຽວຂ້ອງກັບວຽກງານສັງຄົມສົງເຄາະ;
8. ສັງລວມຂໍ້ມູນ, ສະຖິຕິກ່ຽວກັບວຽກງານສັງຄົມສົງເຄາະ;
9. ພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບວຽກງານສັງຄົມສົງເຄາະ;
10. ສະຫລຸບ, ລາຍງານວຽກງານສັງຄົມສົງເຄາະໃຫ້ລັດຖະບານ;
11. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 31. ສິດ ແລະ ໜ້າທີ່ຂອງພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນ**

ໃນການຄຸ້ມຄອງວຽກງານສັງຄົມສົງເຄາະ ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍແຜນນະໂຍບາຍ, ແຜນຍຸດທະສາດ, ລະບຽບກົດໝາຍ ແລະ ແຜນພັດທະນາກ່ຽວກັບວຽກງານສັງຄົມສົງເຄາະ;
2. ຂື້ນແຜນງົບປະມານປະຈຳປີ ເພື່ອຮັບໃຊ້ວຽກງານສັງຄົມສົງເຄາະ;
3. ຊີ້ນຳ, ຕິດຕາມ, ກວດກາ ແລະ ຄຸ້ມຄອງມູນນິທິ, ສະມາຄົມ ແລະ ການຈັດຕັ້ງຕ່າງໆ ເຄື່ອນໄຫວວຽກງານສັງຄົມສົງເຄາະຢູ່ທ້ອງຖິ່ນ ຕາມພາລະບົດບາດຂອງຕົນ;
4. ຢັ້ງຢືນຂໍ້ມູນສະຖິຕິກ່ຽວກັບວຽກງານສັງຄົມສົງເຄາະ;
5. ປະສານສົມທົບກັບບັນດາ ພະແນກການ ແລະ ການຈັດຕັ້ງຕ່າງໆຂັ້ນແຂວງ ກ່ຽວກັບວຽກງານສັງຄົມສົງເຄາະ;
6. ລະດົມທຶນຈາກພາກສ່ວນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຮັບໃຊ້ເຂົ້າໃນວຽກງານສັງຄົມສົງເຄາະ;
7. ຮັບພິຈາລະນາ ແລະ ແກ້ໄຂຄຳຮ້ອງທຸກ ຕາມສິດ ແລະ ໜ້າທີ່ຂອງຕົນ;
8. ຕິດຕາມ, ກວດກາ, ປະເມີນຜົນ ແລະ ສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານ ສັງຄົມສົງເຄາະຢູ່ທ້ອງຖິ່ນຂອງຕົນ.

**ມາດຕາ 32. ສິດ ແລະ ໜ້າທີ່ຂອງຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ແລະ ເທດສະບານ**

ໃນການຄຸ້ມຄອງວຽກງານສັງຄົມສົງເຄາະ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເກັບກຳຂໍ້ມູນສະຖິຕິວຽກງານສັງຄົມສົງເຄາະ;
2. ສ້າງແຜນການ ແລະ ແຜນງົບປະມານ ເພື່ອຮັບໃຊ້ວຽກງານສັງຄົມສົງເຄາະ;
3. ປະສານສົມທົບກັບ ຫ້ອງການ ແລະ ການຈັດຕັ້ງຕ່າງໆ;
4. ປຸກລະດົມຊຸກຍູ້ໃຫ້ຊຸມຊົນ ແລະ ສັງຄົມມີສ່ວນຮ່ວມ;
5. ຈັດຕັ້ງປະຕິບັດການຊ່ວຍເຫຼືອ ແລະ ການບໍລິການ;
6. ຕິດຕາມ, ປະເມີນຜົນ ແລະ ສະຫຼຸບລາຍງານ;
7. ຮັບ, ພິຈາລະນາ ແລະ ແກ້ໄຂຄຳຮ້ອງທຸກ .

**ມາດຕາ 33. ເນື້ອໃນການກວດກາ**

ເນື້ອໃນການກວດກາວຽກງານສັງຄົມສົງເຄາະ ມີດັ່ງນີ້:

1. ການຈັດຕັ້ງປະຕິບັດຫຼັກການ, ລະບຽບການ ແລະ ແຜນການກ່ຽວກັບວຽກງານສົງເຄາະ;
2. ລາຍຮັບ-ລາຍຈ່າຍກອງທຶນສົງເຄາະ;
3. ປະລິມານ ແລະ ຄຸນນະພາບຂອງການຊ່ວຍເຫຼືອ;
4. ຄຳຮ້ອງ, ຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ;
5. ຄວາມຮັບຜິດຊອບ ແລະ ການປະພຶດຂອງພະນັກງານ ທີ່ຈັດຕັ້ງປະຕິບັດວຽກງານສັງຄົມສົງເຄາະ.

**ມາດຕາ 34. ຮູບການກວດກາ**

ຮູບການກວດກາປະກອບດ້ວຍ:

1. ການກວດກາປົກກະຕິ ຊຶ່ງແມ່ນການກວດຕາມແຜນການທີ່ໄດ້ກຳນົດໄວ້;
2. ການກວດກາເພື່ອຕິດຕາມຜົນ ແມ່ນການກວດກາຄືນພາຍຫຼັງທີ່ໄດ້ກ່າວເຕືອນ ຫລື ແນະນຳໃຫ້ມີການປັບປຸງປ່ຽນແປງ;
3. ການກວດກາກະທັນຫັນ ແມ່ນການກວດກາໂດຍບໍ່ໄດ້ແຈ້ງໃຫ້ຮູ້ລ່ວງໜ້າ.

ການດຳເນີນການກວດກາ ໃຫ້ປະຕິບັດຕາມລະບຽບກົດໝາຍຢ່າງເຂັ້ມງວດ.

## ໝວດທີ 9
## ການຍ້ອງຍໍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 35. ການຍ້ອງຍໍຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ທີ່ໄດ້ປະກອບສ່ວນດ້ານເຫື່ອແຮງ, ສະຕິປັນຍາ ແລະ ຊັບສິນ ເຂົ້າໃນວຽກງານສັງຄົມສົງເຄາະ ຈະໄດ້ຮັບການຍ້ອງຍໍຕາມຄວາມເໝາະສົມ.

**ມາດຕາ 36. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງໃດ ຫາກໄດ້ລະເມີດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ ຫລື ຖືກລົງໂທດຕາມກົດໝາຍ.

## ໝວດທີ 10
## ບົດບັນຍັດສຸດທ້າຍ

**ມາດຕາ 37. ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ອອກຄຳແນະນຳລະອຽດ ເພື່ອຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນທຸກຂັ້ນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 38. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ, ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ນາຍົກລັດຖະມົນຕີ**

ທອງສິງ ທຳມະວົງ